ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

ເລກທີ 086 /ສວສ

ນະຄອນຫຼວງວຽງຈັນ, ວັນທີ 20 AUG 2024

# ແຈ້ງການ

**ເຖິງ:** ທ່ານ ອະທິການບໍດີມະຫາວິທະຍາໄລ, ຜູ້ອຳນວຍການວິທະຍາໄລ, ໂຮງຮຽນສາທາລະນະສຸກ, ຫົວໜ້າກົມ, ຜູ້ອຳນວຍການໂຮງໝໍສູນກາງ, ໂຮງໝໍເອກະຊົນ ແລະ ສູນການແພດ, ຫົວໜ້າສູນປິ່ນປົວສະເພາະທາງ, ຫົວໜ້າສະຖາບັນ, ຫົວໜ້າພະແນກສາທາລະນະສຸກແຂວງ ແລະ ນະຄອນຫຼວງ ທີ່ນັບຖື.

**ເລື່ອງ:** ການຂຶ້ນທະບຽນ ແລະ ອອກໃບປະກອບວິຊາຊີບປິ່ນປົວ ສຳລັບຄົນຕ່າງປະເທດ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ສັນຍາຮັບຮູ້ເຊິ່ງກັນ ແລະກັນ (MRA) ລະຫວ່າງ ທ່ານໝໍ, ທັນຕະແພດ, ພະຍາບານ ແລະ ຜະດຸງຄັນ ອາຊຽນ;
- ອີງຕາມ ຄຳແນະນຳການຂຶ້ນທະບຽນ ແລະ ອອກໃບປະກອບວິຊາຊີບປິ່ນປົວ ສຳລັບຄົນຕ່າງປະເທດ ເລກທີ 0144/ສວປ, ລົງວັນທີ 10 ທັນວາ 2021.

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ຄຳແນະນຳການຂຶ້ນທະບຽນ ແລະ ອອກໃບປະກອບວິຊາຊີບປິ່ນປົວ ສຳລັບຄົນຕ່າງປະເທດ ເລກທີ 0144/ສວປ, ລົງວັນທີ 10 ທັນວາ 2021 (ທີ່ໄດ້ຕິດຂັດມາພ້ອມນີ້) ໃຫ້ໄດ້ຮັບຜົນດີ. ຈຶ່ງແຈ້ງການມາຍັງການຈັດຕັ້ງແຕ່ລະພາກສ່ວນ ນັບແຕ່ສູນກາງຮອດທ້ອງຖິ່ນ ກ່ຽວກັບການຂຶ້ນທະບຽນ ແລະ ອອກໃບປະກອບວິຊາຊີບປິ່ນປົວ ໃຫ້ຜູ້ປະກອບວິຊາຊີບທີ່ເປັນຄົນຕ່າງປະເທດ ທີ່ມາເຄື່ອນໄຫວໃນຂົງເຂດວຽກງານການບໍລິການປິ່ນປົວຂອງທ່ານ. ໃຫ້ຜູ້ປະກອບວິຊາຊີບຄົນຕ່າງປະເທດ ປະກອບເອກະສານຄຳຮ້ອງສະເໜີຂຶ້ນທະບຽນ ແລະ ໃບປະກອບວິຊາຊີບປິ່ນປົວ ໂດຍພົວພັນປະສານງານເອົາຄຳຮ້ອງໄດ້ທີ່ ຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຫຼື ດາວໂຫຼດໃນເວບໄຊ hpc.gov.la ແລ້ວປະກອບເອກະສານຕ່າງໆ ຕາມທີ່ລະບຸໄວ້ໃນແບບຟອມ ແລະ ຍື່ນເອກະສານມາຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ.

**<u>ໝາຍເຫດ</u>:** ແຈ້ງການສະບັບນີ້ໃຊ້ສຳລັບທ່ານໝໍ ແລະ ທັນຕະແພດ ລະດັບຊ່ຽວຊານ, ປະລິນຍາໂທຂຶ້ນໄປ. ພະຍາບານ ແລະ ຜະດຸງຄັນ ລະດັບປະລິນຍາຕີຂຶ້ນໄປ.

ດັ່ງນັ້ນ ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງນີ້.

ເຊັນແທນ ປະທານ

ສະພາຄຸ້ມຄອງວິຊາຊີບປິ່ນປົວ

ສຈ ດຣ ຈັນເພັງ ທຳມະວົງ

<u>ຕິດຕໍ່ປະສານງານ:</u>

ດຣ. ນິບພາວັນ: 55607714; ດຣ. ເລກ: 55008875; ທ. ບຸນປະສິດ 59868071